ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຈັດກອງປະຊຸມກຸ່ມທີ່ປຶກສາອາຊຽນ ຄັ້ງທີ 19 ປະຈຳປີ 2021




ໃນວັນທີ 21 ຫາ 22 ກັນຍາ 2021 ຜ່ານມາ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຕາງໜ້າ ສປປ ລາວ ເປັນປະທານກອງປະຊຸມກຸ່ມທີ່ປຶກສາອາຊຽນ ຄັ້ງທີ 19 (Fund Advisory Group: FAG) ປະຈຳປີ 2021 ທີ່ຈັດຂຶ້ນຜ່ານລະບົບປະຊຸມທາງໄກຢູ່ຫ້ອງປະຊຸມຊັ້ນ 2 ກົມຮ່ວມມືສາກົນ ໂດຍການເປັນປະທານຂອງ ທ່ານ ຄຳແກ້ວ ວິສີສົມບັດ ຫົວໜ້າກົມບໍລິການທະນາຄານ, ທຫລ ແລະ ມີທ່ານ ນາງ Darunee Thammapodol ປະທານຄະນະກຳມະການວັດທະນະທຳ ແລະ ຂໍ້ມູນຂ່າວສານອາຊຽນ (ASEAN-Committee on Culture and Information or ASEAN-COCI), ມີຜູ້ຕາງໜ້າຈາກປະເທດສະມາຊິກອາຊຽນ, ກອງເລຂາອາຊຽນ, ສະຖາບັນຜູ້ບໍລິຫານທຶນ, ທະນາຄານຕົວແທນຮັກສາບັນຊີຫຼັກຊັບ ແລະ ກົມກ່ຽວຂ້ອງພາຍໃນທະນາຄານແຫ່ງ ສປປ ລາວເຂົ້າຮ່ວມ.

ກອງປະຊຸມ FAG ແມ່ນກອງປະຊຸມທີ່ຈັດຂຶ້ນປີລະຄັ້ງ ເພື່ອປຶກສາຫາລື, ຕີລາຄາຜົນ ແລະ ປັບປຸງທິດທາງແຜນການໃນຕໍ່ໜ້າ ຂອງການບໍລິຫານກອງທຶນວັດທະນະທຳອາຊຽນ (ASEAN Culture Fund) ແລະ ກອງທຶນພັດທະນາອາຊຽນ (ASEAN Development Fund) ລວມສອງກອງທຶນຈຳນວນ 64,70 ລ້ານໂດລາສະຫະລັດ (ຍອດຮອດທ້າຍປີ 2020) ເຊິ່ງກຸ່ມປະເທດ ASEAN ໄດ້ວ່າຈ້າງໃຫ້ ສະຖາບັນຜູ້ບໍລິຫານທຶນ ນຳທຶນໄປບໍລິຫານ ເພື່ອຮັກສາມູນຄ່າເງິນທຶນ ແລະ ສ້າງຜົນຕອບແທນຈາກເງິນທຶນດັ່ງກ່າວໃຫ້ມີປະສິດທິຜົນ. ສຳລັບຜົນຕອບແທນທີ່ໄດ້ຮັບແມ່ນຈະປະກອບສ່ວນໃນງົບປະມານຂອງ ຄະນະກຳມະການ COCI ໃນຂົງເຂດວຽກງານການສົ່ງເສີມດ້ານວັດທະນະທຳ-ສັງຄົມຂອງ ASEAN.

 

ກອງປະຊຸມ FAG ໄດ້ສຳເລັດລົງຕາມລະດັບຄາດໝາຍ ໃນການປະເມີນຜົນການບໍລິຫານທຶນ ປະຈຳປີ 2020 ແລະ 06 ເດືອນຕົ້ນປີ 2021 ຂອງສະຖາບັນຜູ້ບໍລິຫານທຶນ, ການທົບທວນ ແລະ ປັບປຸງແຜນການບໍລິຫານໝວດລົງທຶນ (Investment Guidelines) ໃຫ້ແທດເໝາະກັບສະພາບ ແລະ ທິດທາງເສດຖະກິດ-ການເງິນສາກົນ ແນໃສ່ຮັບປະກັນຄວາມປອດໄພ ແລະ ການສ້າງຜົນຕອບແທນຂອງກອງທຶນດັ່ງກ່າວຂອງ ASEAN ໃຫ້ສືບຕໍ່ມີປະສິດທິພາບ-ປະສິດທິຜົນ.

#ຂ່າວໂດຍ: ກົມບໍລິການທະນາຄານ

#ພາບໂດຍ: ນາງ ປາໃນ ພົມທະລາ

*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ*